ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0236 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 28 JAN 2019

## ໜັງສືແຈ້ງເຊີນປະມູນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ມີຄວາມຕ້ອງການຄັດເລືອກ ບໍລິສັດທີ່ໃຫ້ບໍລິການສ້າງຮູບແບບຈໍາລອງທາງດ້ານການເງິນຂອງ ຜ-ຟຟລ (Financial Model), ດ້ວຍການດໍາເນີນການປະມູນເປີດກວ້າງພາຍໃນ.

2. ຜ-ຟຟລ ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບ ການບໍລິການຕາມທີ່ໄດ້ລະບຸໃນຂໍ້ 1.

3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບລົງວັນທີ 19/02/2018.

4. ການປະມູນນີ້ ອະນຸຍາດໃຫ້ທຸກບໍລິສັດທີ່ມີເງື່ອນໄຂເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ, ພົວພັນກັບ ການໃຫ້ບໍລິການສ້າງຮູບແບບຈໍາລອງທາງດ້ານການເງິນດັ່ງກ່າວ ເຂົ້າຮ່ວມ.

5. ບໍລິສັດ ທີ່ມີເງື່ອນໄຂເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສໍານັກງານໃຫຍ່ ຜ-ຟຟລ, ຝ່າຍແຜນການ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 29/01/2019 ເປັນຕົ້ນໄປ, ຕອນເຊົ້າເວລາ 08:30 - 12:00 ໂມງ ແລະ ຕອນບ່າຍ 13:00 - 17:00 ໂມງ. ສໍານັກງານຕັ້ງຢູ່ ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ ສປປ. ລາວ ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

6. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ ຕາມທີ່ຢູ່ ທີ່ລະບຸໃນຂໍ້ 5, ເລີ່ມແຕ່ວັນທີ 29/01/2019 ເປັນຕົ້ນໄປ, ໃນວັນ ແລະ ເວລາທີ່ລະບຸໃນຂໍ້ 5, ໃນລາຄາ 200.000 (ສອງແສນ) ກີບ/ຊຸດ, ວິທີການຊໍາລະຕ້ອງ ຊໍາລະເປັນເງິນສົດ, ໂດຍຈໍານວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

7. ຊອງປະມູນຕ້ອງສົ່ງໃຫ້ຕາມທີ່ຢູ່ ທີ່ລະບຸໃນຂໍ້ 5, ກ່ອນເວລາ 14:00 ໂມງ, ວັນທີ 22/02/2019. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະໄດ້ເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 22/02/2019 ໂດຍຊ້ອງໜ້າຄະນະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.

**ຜູ້ອໍານວຍການໃຫຍ່**

ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງວຽງຈັນ

ລັດຕະນາ ປະທຸມວັນ

ໝາຍເຫດ: ຂໍ້ມູນເພີ່ມເຕີມຕິດຕໍ່: 021 316 834.

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ.
ໂທລະສັບ: (856-21) 316142, ແຟັກ: (856-21) 316141, ອີເມລ: edlgenhq@edlgen.com.la; ເວັບໄຊ: www.edlgen.com.la